# ບໍລິສັດ ສຸວັນນີ ໂຮມເຊັນເຕີ ໄດ້ຮັບລາງວັນ ນັກທຸລະກິດຊັ້ນນຳດີເດັ່ນ 2024

ໃນວັນທີ 14 ພະຈິກ 2025 ເວລາ 17:00 ທີ່ ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ຈັດງານມອບລາງວັນນັກທຸລະກິດຊັ້ນນຳດີເດັ່ນ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ (ສຄອຊ) ໂດຍການໃຫ້ກຽດເຂົ້າຮ່ວມ ຂອງ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ມີຮອງລັດຖະມົນຕີ, ປະທານ, ຮອງປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ພ້ອມດ້ວຍບັນດາທ່ານຕາງໜ້າຈາກ ພາກລັດ, ສະມາຄົມທຸລະກິດ, ນັກທຸລະກິດ ຜູ້ປະກອບການ ເຂົ້າຮ່ວມຫຼາຍກວ່າ 300 ທ່ານ.

ໂດຍບໍລິສັດ ສຸວັນນີ ໂຮມເຊັນເຕີ ກໍເປັນໜຶ່ງໃນຫົວໜ່ວຍທຸລະກິດທີ່ໄດ້ຮັບລາງວັນທຸລະກິດຊັ້ນນຳດີເດັ່ນ ສຄອຊ ປະຈຳປີ 2024 ເຊິ່ງໄດ້ຮັບກຽດມອບລາງວັນໂດຍທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນກຽດຮັບໂດຍທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ໂດຍຕະຫຼອດໄລຍະເວລາທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ດຳເນີນທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງຕົບແຕ່ງເຮືອນຄົບວົງຈອນ ໃນ ສປປ ລາວ ແນໃສ່ການພັດທະນາທີ່ຢູ່ອາໄສ, ສົ່ງເສີມຄຸນນະພາບຊີວິດ ແລະ ການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນ ພ້ອມຍຶດໝັ້ນການປະກອບທຸລະກິດດ້ວຍຄວາມຊື່ສັດ-ຈິງໃຈ ແລະ ຮັກສາທຸກຜົນປະໂຫຍດຂອງຜູ້ມີສ່ວນໄດ້ເສຍຂອງທຸກພາກສ່ວນ ເພື່ອການພັດທະນາແບບຍືນຍົງ. ສຳລັບການໄດ້ຮັບລາງວັນນັກທຸລະກິດຊັ້ນນຳດີເດັ່ນ ສຄອຊ ປະຈຳປີ 2024 ຄັ້ງນີ້ ພວກເຮົາ ກໍຖືເປັນໜຶ່ງໃນຄວາມພາກພູມໃຈ ແລະ ເປັນກຽດຢ່າງຍິ່ງທີ່ໄດ້ຮັບລາງວັນລະດັບປະເທດ ເພາະເປັນການສະທ້ອນໃຫ້ເຫັນເຖິງຄວາມທຸ່ມເທທັງແຮງກາຍ-ແຮງໃຈ ຂອງບຸກຄະລາກອນ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈົນເປັນທີ່ຍອມຮັບໂດຍທົ່ວໄປໃນສັງຄົມ.

